ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິໄຕ ເອກະພາບ ວັດທະນະຖາວອນ

ແຂວງສາລະວັນ

ເລກທີ...03.../ຈຂ.ສວ

ສາລະວັນ, ວັນທີ...1.4.2022.

# ຄຳສັ່ງ

ເຖິງ: - ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ.

- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ.
- ທ່ານ ເຈົ້າເມືອງ 08 ຕົວເມືອງ.
- ບັນດາທ່ານ ເຈົ້າຂອງໂຮງງານປຸງແຕ່ງໄມ້ ແລະ ເຟີນີເຈີ ພາຍໃນແຂວງ.

ເລື່ອງ: ເພີ່ມທະວີການຕິດຕາມ, ກວດກາ ການລັກລອບຕັດໄມ້, ຊື້ - ຂາຍໄມ້, ເຄື່ອນຍ້າຍໄມ້ ແລະ ຄຸ້ມຄອງ - ດັດສົມໂຮງງານປຸງແຕ່ງໄມ້, ປົກປັກຮັກສາປ່າໄມ້ ໃນຂອບເຂດທົ່ວແຂວງ ສາລະວັນ.

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 15/ນຍ, ລົງວັນທີ 13/5/2016 ວ່າດ້ວຍ: ການເພີ່ມທະວີ ຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້, ແລະ ທຸລະກິດໄມ້.
- ອີງຕາມ ຂໍ້ຕົກລົງທ່ານເຈົ້າແຂວງສາລະວັນ ເລກທີ 62/ຈຂ.ສວ, ລົງວັນທີ 25/1/2022.

ປະຕິບັດຕາມຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 15/ ນຍ ແລະ ຄຳແນະນຳ, ແຈ້ງການຕ່າງໆຂອງກະຊວງທີ່ກ່ຽວຂ້ອງ ໄລຍະຜ່ານມາ ອົງການປົກຄອງແຕ່ລະຂັ້ນ, ພາກສ່ວນກ່ຽວຂ້ອງໄດ້ຕັ້ງໜ້າປະຕິບັດຕາມລະບົດບາດ ຢ່າງຈິງຈັງ ແລະ ເຂັ້ມງວດ ອັນໄດ້ເຮັດໃຫ້ບັນຫາປະກົດການຫຍໍ້ທໍ້ຕ່າງໆ ກ່ຽວກັບການລັກລອບຂຸດຄົ້ນໄມ້, ຊື້ - ຂາຍໄມ້ແບບບໍ່ຖືກຕ້ອງຕາມກົດໝາຍ ຫຼຸດລົງຈຳນວນຫຼາຍ. ແຕ່ກໍຍັງມີປະກົດການຈຳນວນໜຶ່ງ ຢູ່ບາງຂົງເຂດ ທີ່ຍັງມີການລັກລອບຕັດໄມ້, ຊື້ - ຂາຍໄມ້, ການລັກລອບໄມ້ເຂົ້າໂຮງງານ, ເກີດມີການບຸກລຸກເນື້ອທີ່ 3 ປະເພດ ປ່າຫວງຫ້າມ ເພື່ອປູກມັນຕົ້ນ ແລະ ອື່ນໆ ແບບຜິດຕໍ່ລະບຽບ - ກົດໝາຍ. ສະນັ້ນ, ເພື່ອຮັບປະກັນໃຫ້ແກ່ການສືບຕໍ່ຈັດຕັ້ງປະຕິບັດ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 15/ນຍ ໃຫ້ມີຄວາມເຂັ້ມງວດ ແລະ ແກ້ໄຂບັນຫາປະກົດການຫຍໍ້ທໍ້ດັ່ງກ່າວໃຫ້ໄດ້ຢ່າງເຂັ້ມງວດ.

**ຮອງເຈົ້າແຂວງ**

**(ຫົວໜ້າຄະນະສະເພາະກິດໄມ້ຂັ້ນແຂວງ) ອອກຄຳສັ່ງ:**

1. ໃຫ້ເຈົ້າເມືອງ 8 ຕົວເມືອງ ເພີ່ມທະວີຄວາມເອົາໃຈໃສ່ຊີ້ນຳຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ຂັ້ນຮາກຖານບ້ານ ເຮັດໜ້າທີ່ໃນການເຜີຍແຜ່, ຜັນຂະຫຍາຍ, ເຊື່ອມຊຶມ ລະບຽບກົດໝາຍທີ່ກ່ຽວຂ້ອງ ໃນການປົກປັກຮັກສາປ່າໄມ້, ການນຳໃຊ້ທີ່ດິນ, ແຫຼ່ງນ້ຳທຳມະຊາດ ເດັດຂາດບໍ່ໃຫ້ເກີດມີປະກົດການຫຍໍ້ທໍ້ກ່ຽວກັບ ການບຸກລຸກເນື້ອທີ່ດິນ ແລະ ປ່າໄມ້ ເຂດປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ແບບຜິດຕໍ່ລະບຽບກົດໝາຍຢ່າງເດັດຂາດ ພ້ອມກັນນັ້ນ ກໍໃຫ້ ກວດກາ ແລະ ຍຸບເລີກໂຮງງານເຟີນີເຈີແບບຄອບຄົວທີ່ບໍ່ໄດ້ຮັບອະນຸຍາດໃນແຕ່ລະບ້ານ.

2. ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ ເພີ່ມທະວີຄວາມເອົາໃຈໃສ່ ຮັບຮ້ອນປະສານສົມທົບກັບພະແນການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຮາກຖານບ້ານ ເພື່ອສຸມໃສ່ເຮັດໜ້າທີ່ໃນການຄຸ້ມຄອງ, ກວດກາ, ປົກປັກຮັກສາທີ່ດິນ, ການລັກລອບຕັດໄມ້ທຳລາຍປ່າ, ການບຸກລຸກເນື້ອທີ່ປ່າໄມ້ ເພື່ອປູກມັນຕົ້ນ ທີ່ນອນໃນເຂດປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ ເຊິ່ງຜິດຕໍ່ລະບຽບກົດໝາຍຢ່າງອອກ ພ້ອມທັງ ເອົາໃຈໃສ່ປະຕິບັດຕາມແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ, ແຜນນຳໃຊ້ທີ່ດິນກະສິກາ ແລະ ປ່າໄມ້ແບບຍືນຍົງ ພ້ອມທັງມີມາດຕະການແກ້ໄຂຢ່າງເດັດຂາດຕໍ່ກັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ. ໄປພ້ອມກັບການສຶກສາອົບຮົມດ້ານແນວຄິດການເມືອງ ໃຫ້ແກ່ພະນັກງານເຈົ້າໜ້າທີ່ກອງກວດກາປ່າໄມ້ປະຈຳປ້ອມດ່ານ, ກອງຄຸ້ມຄອງປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ ຢ່າງລຽນຕິດ ເພື່ອໃຫ້ຍົກສູງສະຕິຊາດ, ປະຕິບັດລະບຽບກົດໝາຍໃຫ້ເຂັ້ມງວດ.

3. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ໃຫ້ເພີ່ມທະວີຄວາມເປັນເຈົ້າການຊຸ້ນຂ້ຽວໃນການປະສານສົມທົບກັບພະແນການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ເຮັດໜ້າທີ່ໃນການຕິດສົມໂຮງງານປຸງແຕ່ງໄມ້ ແລະ ເຟີນິເຈີ ໃຫ້ໄດ້ມາດຖານຕາມຂໍ້ຕົກລົງເລກທີ 0222/ອຄ.ກອຫ, ລົງວັນທີ 23/03/2021 ສຳເລັດຢ່າງຂາດຕົວ ແລະ ສອດຄ່ອງຕາມທິດນຳຂອງແຂວງ ພ້ອມກັນນັ້ນ ຕ້ອງເອົາ ໃຈໃສ່ຕິດຕາມຈິດກ່າຍ - ຫັກລົບບັນຊີໄມ້ສົ່ງເຂົ້າ, ສົ່ງອອກ, ການຜະລິດປຸງແຕ່ງໄມ້ ແລະ ບັນຊີໄມ້ຍັງຄ້າງໂຮງງານ ໂດຍເຮັດເປັນແຜນຢ່າງຮັດກຸມ ເພື່ອບໍ່ໃຫ້ມີຊ່ອງວ່າງໃຫ້ໂຮງງານລັກລອບເກັບຊື້ໄມ້ເຂົ້າໂຮງງານແບບບໍ່ຖືກຕ້ອງຕາມລະບຽບກົດໝາຍ.

4. ບັນດາໂຮງງານປຸງແຕ່ງໄມ້ ແລະ ເຟີນິເຈີ ຕ້ອງເພີ່ມທະວີການຜະລິດ - ປຸງແຕ່ງຜະລິດຕະພັນໄມ້ຂອງຕົນ ຮັບປະກັນດ້ານສະເປັກ, ຂະໜາດ, ຮູບແບບ ໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງຕາມຂໍ້ຕົກລົງຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0851/ອຄ,ລົງວັນທີ 14 ກັນຍາ 2021 ວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ເພື່ອສົ່ງອອກ (ສະບັບປັບປຸງ). ຜູ້ປະກອບການໂຮງງານຕ້ອງສ້າງແຜນການຜະລິດ, ແຜນການສົ່ງອອກ ແລະ ມີສັນຍາຊື້ - ຂາຍກັບຕະຫຼາດ ຢູ່ຕ່າງປະເທດ.

4.1. ເພີ່ມທະວີການຄຸ້ມຄອງການສົ່ງອອກຜະລິດຕະພັນໄມ້ ໂດຍຈັດເປັນແຜນສົ່ງອອກແຕ່ລະມື້ອະນຸຍາດປ່ອຍລົດອອກຈາກໂຮງງານບໍ່ໃຫ້ເກີນ 5 - 7 ຄັນ ແລະ ຜັດປ່ຽນກັນເປັນແຕ່ລະແຂວງ ແລະ ກ່ອນຈະສົ່ງອອກຜະລິດ ຕະພັນໄມ້ໂຮງງານຕ້ອງສະເໜີຫາພະແນກອຸດສາຫະກຳ ແລະ ການຄ້າກ່ອນ 3 - 4 ວັນ ເພື່ອລາຍງານໄປຍັງຫ້ອງວ່າການແຂວງ ເພື່ອຂໍທິດຊີ້ນຳຈາກຂັ້ນເທິງໃນການອະນຸຍາດໃຫ້ສົ່ງອອກ.

4.2. ຫ້າມບໍ່ໃຫ້ຮັບຊື້ໄມ້ທີ່ຜິດຕໍ່ລະບຽບກົດໝາຍ ເຂົ້າມາຜະລິດ, ປຸງແຕ່ງ, ຊຸກເຊື່ອງຢູ່ໃນໂຮງງານ ຫຼື ຢູ່ເບື້ອງຫຼັງການຕັດໄມ້ທຳລາຍປ່າໃນທຸກຮູບການຢ່າງເດັດຂາດ. ຖ້າພົບເຫັນໂຮງງານໃດມີການລັກລອບເຄື່ອນໄຫວເກັບຊື້ໄມ້ເຂົ້າມາໂຮງງານບໍ່ວ່າຈຳນວນບໍລິມາດໄມ້ຈະໜ້ອຍ ຫຼື ຫຼາຍກໍ່ຕາມ ແມ່ນຈະໄດ້ປະຕິບັດມາດຕະການກັກຢຶດ, ປັບໃໝ ແລະ ດຳເນີນຄະດີ ຕາມກົດໝາຍວ່າດ້ວຍ: ປ່າໄມ້ ເລກທີ 64/ສພຊ ແລະ ກົດໝາຍວ່າດ້ວຍ: ອຸດສາຫະກຳປຸງແຕ່ງ ເລກທີ 048/ສພຊ ຢ່າງເຂັ້ມງວດ ຫຼື ກ້າວໄປເຖິງການຍຸບເລີກກິດຈະການໂຮງງານຕາມແຕ່ລະກໍລະນີ.

5. ການສົ່ງອອກຜະລິດຕະພັນໄມ້ທຳມະຊາດໄປຕ່າງປະເທດ ໃຫ້ປະຕິບັດການກວດກາຕາມຄວາມຮັບຜິດຊອບຂອງຂະແໜງການຄື:

5.1. ພະແນກອຸດສາຫະກຳ ແລະ ການຄ້າ ກວດກາ ແລະ ຢັ້ງຢືນຮູບແບບ, ຂະໜາດ ແລະ ປະເພດຂອງຜະລິດຕະພັນໄມ້ທຳມະຊາດທີ່ໂຮງງານສາມາດຜະລິດໄດ້ ແລະ ຂໍສົ່ງອອກ ໂດຍນຳໃຊ້ຮ່າງແບບຟອມ (ອ1) ທີ່ກະຊວງອຸດສາ

ຫະກຳ ແລະ ການຄ້າວາງອອກ.

5.2. ພະແນກກະສິກຳ ແລະ ປ່າໄມ້ ກວດກາ ແຫຼ່ງທີ່ມາຂອງໄມ້, ຊະນິດໄມ້, ຈຳນວນ, ນ້ຳໜັກ ຫຼື ບໍລິມາດໄມ້ ສົມທຽບໃສ່ບັນຊີໄມ້ສິ້ນເຂົ້າ - ສິ້ນອອກ.

5.3. ພະແນກການເງິນ ກວດກາ ແລະ ຢັ້ງຢືນການເສຍພັນທະໄມ້, ອາກອນຕ່າງໆ ໃຫ້ຄົບຖ້ວນຖືກຕ້ອງ ຕາມລະບຽບການ ແລະ ໜີບກົ່ວໃສ່ຕູ້ຄອນທາຍເນີແຕ່ລະຄັນລົດ.

6. ທຸກໆການຈັດຕັ້ງປະຕິບັດພົບຄວາມຫຍຸ້ງຍາກປະການໃດ ແມ່ນໃຫ້ລາຍງານ ແລະ ຂໍທິດຊີ້ນຳຈາກຂັ້ນເທິງ.

7. ຄຳສັ່ງສະບັບນີ້ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

ຮອງເຈົ້າແຂວງ

(ຫົວໜ້າຄະນະສະເພາະກິດໄມ້ຂັ້ນແຂວງ)

ພູທິງ ຄຳມະນີວົງ

+ ບ່ອນນຳສົ່ງ:

| | |
|---|---|
| - ເມືອງລະ | 01 ສະບັບ |
| - ພະແນກອຸດສາຫະກຳ ແລະ ການຄ້າແຂວງ | 01 ສະບັບ |
| - ພະແນກກະສິກຳ ແລະ ປ່າໄມ້ແຂວງ | 01 ສະບັບ |
| - ໂຮງງານປຸງແຕ່ງໄມ້ ແລະ ເຟີນີເຈີລະ | 01 ສະບັບ |
| - ເກັບຮັກສາໄວ້ | 01 ສະບັບ |